*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 02, 87-94*
*https://doi.org/10.69692/SUJMRD120287*

# The Factors Affecting Change in the Household Economics Structure in Luang Prabang City

**Khambang Sayyasone*[1], Bounthavy Siphanthong[1], Soutthavone Sioudomphan[1]**

*Department of Economics Faculty of Economics and Tourism Souphanouvong University, Lao PDR*

***Correspondence:** Khambang Sayyasone, Treasury of LuangPrabang province, Tel: 020 22957774, E-mail: Larkhambang@gmail.com
1Department of Economics Faculty of Economics and Tourism Souphanouvong University

***Article Info:***
***Submitted: March 10, 2026***
***Revised: March 30, 2026***
***Accepted: April 09, 2026***

**ABSTRACT**

The Research on the economic structure of households in LuangPrabang city this research aims to: 1) analyze the economic structure of households in LuangPrabang city and 2) study factors affecting changes in the economic structure of households in LuangPrabang city. This research method used a quantitative study method using closed-ended and open-ended questionnaires to collect data from a sample of 318 households. Descriptive statistics including frequency values and percentages and inferential statistics including multiple regression with the ordinary least squares method were used to analyze the data using the statistical data analysis program SPSS version 27.

The results found that: 1) Analyzing the household economic structure in LuangPrabang city, the household income structure of the Mano people is mainly from personal businesses. The household consumption expenditure structure of the Mano people is expenditure on food, beverages, and alcoholic beverages. The household savings structure of the Mano people found that household savings accounted for a relatively large proportion and were mostly intended for saving for daily use. In terms of the household debt structure of the Mano people, it was found that there was still a considerable amount of household debt from other sources (Share). And 2) Factors affecting changes in the household economic structure in LuangPrabang city found that household income is an important variable and has the greatest impact on changes in the household economic structure because consumption, savings, and debt are all caused by household income being too little or too much, sufficient or insufficient for consumption.

**Keywords:** *Factors, Household, Economics structure*

## 1. ພາກສະເໜີ

ໃນທາງເສດຖະສາດໄດ້ຈຳແນກໃຫ້ຄົວເຮືອນເປັນໜ່ວຍໜຶ່ງໃນລະບົບເສດຖະກິດທີ່ເຮັດໜ້າທີ່ເປັນທັງຜູ້ບໍລິໂພກ ແລະ ເຈົ້າຂອງປັດໄຈການຜະລິດ, ເຊິ່ງການເປັນເຈົ້າຂອງປັດໄຈການຜະລິດ ເຮັດໃຫ້ຄົວເຮືອນມີລາຍໄດ້ ມາໃຊ້ຈ່າຍໃນຖານະຜູ້ບໍລິໂພກ ເຊິ່ງການບໍລິໂພກມີຄວາມຈຳເປັນໃນການດຳລົງຊີວິດປະຈຳວັນຂອງມະນຸດ ດັ່ງນັ້ນ, ມະນຸດຈຶ່ງມີຄວາມຕ້ອງການທາງດ້ານອາຫານ, ເຄື່ອງດື່ມ ແລະ ສິ່ງຕ່າງໆ ຈຶ່ງກໍ່ໃຫ້ເກີດມີການຜະລິດເພື່ອເປັນສິນຄ້າເກີດຂຶ້ນ ຖ້າສິນຄ້າໃດປະເທດດັ່ງກ່າວຜະລິດບໍ່ໄດ້ກໍ່ຈະມີການນຳເຂົ້າ ແລະ ສົ່ງອອກສິນຄ້າທີ່ຕົນເອງຜະລິດໄດ້ອັນກໍ່ໃຫ້ເກີດມີການຂະຫຍາຍຕົວທາງດ້ານເສດຖະກິດ (Szopinski, 2017). ປັດໄຈ 4 ໃນການດຳລົງຊີວິດປະກອບມີອາຫານ, ເຄື່ອງນຸ່ງຮົ່ມ, ທີ່ຢູ່ອາໄສ ແລະ ຢາເພື່ອຮັກສາໂລກຕ່າງໆເປັນຄວາມຕ້ອງການພື້ນຖານຂອງມະນຸດທີ່ທຸກຄົນຕ້ອງມີປັດໄຈເຫຼົ່ານີ້ເພື່ອການດຳລົງຊີວິດ, ເຊິ່ງຖ້າຂາດໄປກໍ່ຈະເຮັດໃຫ້ການດຳລົງຊີວິດເປັນໄປດ້ວຍຄວາມລຳບາກ ແລະ ໜຶ່ງໃນປັດໄຈທີ່ກ່ຽວຂ້ອງໂດຍກົງໃນການດຳລົງຊີວິດຂອງມະນຸດກໍ່ຄື "ອາຫານ" ເຊິ່ງເປັນສິ່ງທີ່ສຳຄັນໃນການດຳລົງຊີວິດເປັນແຫຼ່ງພະລັງງານທີ່ສິ່ງມີຊີວິດທຸກຊະນິດຕ້ອງການເປັນການບໍລິໂພກເພື່ອໃຫ້ຮ່າງກາຍໄດ້ຮັບພະລັງງນຈາກແຫຼ່ງພະລັງງານ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ດັ່ງກ່າວໄປໃຊ້ປະໂຫຍດສຳລັບການເຮັດກິດຈະກຳຕ່າງໆໃນຊີວິດປະຈຳວັນຫາກຂາດປັດໄຈທີ່ເອີ້ນວ່າອາຫານຊີວິດກໍ່ຈະບໍ່ສາມາດດຳເນີນໄປໄດ້ຢ່າງປົກກະຕິ.ການອອມມີຄວາມສຳຄັນ ແລະ ຄວາມຈຳເປັນຕໍ່ການຈະເລີນເຕີບໂຕທາງດ້ານເສດຖະກິດຂອງປະເທດເນື່ອງຈາກວ່າການອອມເປັນຮາກຖານຂອງການລົງທຶນຂອງຜູ້ປະກອບການ ແລະ ການອອມກໍ່ເປັນໜຶ່ງໃນການຊີ້ວັດລະດັບລາຍໄດ້ຂອງປະຊາຊົນ ເຊິ່ງສະແດງເຖິງການຈະເລີນເຕີບໂຕທາງດ້ານເສດຖະກິດ (Gulcin & Aycan, 2014).

ນັກເສດຖະສາດໄດ້ໃຫ້ຄວາມສົນໃຈສຶກສາໂຄງສ້າງເສດຖະກິດຂອງພາກຄົວເຮືອນມາເປັນເວລາດົນນານ ເນື່ອງຈາກການບໍລິໂພກເປັນກິດຈະກຳທາງເສດຖະສາດທີ່ມີຄວາມສຳຄັນ ເພາະວ່າມະນຸດທຸກຄົນຕ້ອງບໍລິໂພກເພື່ອການດຳລົງຊີວິດ ແລະ ການບໍລິໂພກຍັງເປັນສິ່ງກະຕຸ້ນໃຫ້ເກີດການລົງທຶນ, ການຈ້າງງານ ເຮັດໃຫ້ມີລາຍໄດ້ທັງຜູ້ຜະລິດ ແລະ ເຈົ້າຂອງປັດໄຈການຜະລິດ, ມີສິນຄ້າ ແລະ ບໍລິການເພີ່ມຂຶ້ນ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວ ໂດຍສະເພາະແມ່ນການບໍລິໂພກເປັນຕົວສຳຄັນໃນການກຳນົດການຕັດສິນໃຈໃນການເລືອກຜະລິດສິນຄ້າ ແລະ ການບໍລິການຂອງຜູ້ຜະລິດວ່າຈະຜະລິດຫຍັງ, ປະລິມານເທົ່າໃດ, ເຊິ່ງຜູ້ຜະລິດຈະເລືອກຜະລິດສິນຄ້າ ແລະ ບໍລິການທີ່ສອດຄ່ອງກັບຄວາມຕ້ອງການຂອງຜູ້ບໍລິໂພກ ເພື່ອໃຫ້ສິນຄ້າ ແລະ ການບໍລິການທີ່ຜະລິດຂຶ້ນສາມາດຈຳໜ່າຍໄດ້. ເຮັດໃຫ້ກິດຈະການທາງເສດຖະກິດສາມາດດຳເນີນໄປຢ່າງຕໍ່ເນື່ອງ, ຈຶ່ງຖືວ່າການບໍລິໂພກມີບົດບາດສຳຄັນຕໍ່ການພັດທະນາເສດຖະກິດຂອງປະເທດ. ຍິ່ງໄປກວ່ານັ້ນ ການບໍລິໂພກຍັງເປັນອົງປະກອບທີ່ສຳຄັນໃນດ້ານອຸປະສົງມວນລວມ ຫຼື ລາຍຈ່າຍລວມ (Skulcharoen, 2002).

ລາຍໄດ້, ການບໍລິໂພກ, ການອອມ ແລະ ໜີ້ສິນເປັນສິ່ງທີ່ຈຳເປັນ ແລະ ສຳຄັນທີ່ສຸດຕໍ່ກັບທຸກຄົນໃນທົ່ວສັງຄົມບໍ່ວ່າໃນອະດີດ ຫຼື ປະຈຸບັນ, ຄົນທຸກຈົນ ຫຼື ຄົນຮັ່ງມີ ລ້ວນແລ້ວມີຄວາມຈຳເປັນໃນການສ້າງລາຍໄດ້, ການບໍລິໂພກ ເພື່ອການດຳລົງຊີວິດ ແລະ ຄວາມຢູ່ລອດ. ນອກຈາກນັ້ນ, ລາຍໄດ້, ການບໍລິໂພກ ແລະ ການອອມຍັງເປັນສິ່ງກະຕຸ້ນໃຫ້ເກີດມີການລົງທຶນ, ການຈ້າງງານ ເຮັດໃຫ້ສັງຄົມເກີດມີລາຍໄດ້ທັງຜູ້ຜະລິດ ແລະ ເຈົ້າຂອງປັດໄຈການຜະລິດ, ມີສິນຄ້າ ແລະ ການບໍລິການຕ່າງໆເພີ່ມຂຶ້ນ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວ (Mankiw, 2019). ລາຍໄດ້, ການບໍລິໂພກ ແລະ ການອອມເປັນສິ່ງສຳຄັນໃນການກຳນົດການຕັດສິນໃຈໃນການເລືອກຜະລິດສິນຄ້າ ແລະ ການບໍລິການ ຂອງຜູ້ຜະລິດວ່າ ຈະຜະລິດສິນຄ້າ ຫຼື ການບໍລິການຊະນິດໃດ, ປະລິມານການຜະລິດໃນຈຳນວນເທົ່າໃດ ເຊິ່ງຜູ້ຜະລິດສິນຄ້າ ແລະ ການບໍລິການ ທີ່ສອດຄ່ອງກັບຄວາມຕ້ອງການຂອງຜູ້ບໍລິໂພກ ເພື່ອໃຫ້ສິນຄ້າ ແລະ ການບໍລິການ ທີ່ຜະລິດມານັ້ນ ສາມາດຈຳໜ່າຍເປັນສິນຄ້າໄດ້ເຮັດໃຫ້ກິດຈະກຳທາງເສດຖະກິດສາມາດດຳເນີນໄປໄດ້ຢ່າງຕໍ່ເນື່ອງ (Sing et al., 2024) ພ້ອມກັນນັ້ນ ລາຍໄດ້, ການບໍລິໂພກ ແລະ ການອອມຍັງມີຄວາມສຳຄັນຢ່າງຍິ່ງໃນການວາງນະໂຍບາຍ ແລະ ກຳນົດເປົ້າໝາຍໃນການພັດທະນາດ້ານເສດຖະກິດ ແລະ ສັງຄົມ ຂອງທ້ອງຖິ່ນກໍ່ຄືຂອງປະເທດຊາດອີກດ້ວຍ (Todaro & Smith, 2006). ດັ່ງນັ້ນ, ຈະເຫັນໄດ້ວ່າ ລາຍໄດ້, ການບໍລິໂພກ, ການອອມ ແລະ ໜີ້ສິນຈຶ່ງເປັນສິ່ງທີ່ຈຳເປັນທີ່ສຸດສຳລັບທຸກໆຄົນ ແລະ ທຸກຄົວເຮືອນໃນທົ່ວສັງຄົມ ໂດຍສະເພາະແມ່ນໂຄງສ້າງເສດຖະກິດຂອງແຕ່ລະຄົວເຮືອນລ້ວນແຕ່ມີຄວາມແຕກຕ່າງກັນ ເນື່ອງຈາກໂຄງສ້າງເສດຖະກິດຂອງແຕ່ລະຄົວເຮືອນນັ້ນແມ່ນຂຶ້ນຢູ່ກັບສະຖານະການຂອງແຕ່ລະຄົວເຮືອນ. ເພື່ອເປັນການເຮັດໃຫ້ການດຳເນີນການຄົ້ນຄວ້າວິໄຈຄັ້ງນີ້ ເປັນໄປຕາມເປົ້າໝາຍ ແລະ ສະດວກຕໍ່ການຄົ້ນຄວ້າວິໄຈໂດຍຄະນະຜູ້ວິໄຈມີຈຸດປະສົງເພື່ອ: 1) ວິເຄາະໂຄງສ້າງເສດຖະກິດພາກຄົວເຮືອນໃນນະຄອນຫຼວງພະບາງ ແລະ 2) ສຶກສາປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງເສດຖະກິດພາກຄົວເຮືອນໃນນະຄອນຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ການສຶກສາໄດ້ກຳນົດເອົາປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນຄົວເຮືອນທີ່ຢູ່ພາຍໃນກຸ່ມບ້ານມະໂນ ນະຄອນຫຼວງພະບາງ ແຂວງຫຼວງພະບາງ. ເຊິ່ງປັດຈຸບັນ (ປີ 2025) ຈຳນວນ ຄົວເຮືອນໃນກຸ່ມບ້ານມະໂນ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ເຊິ່ງປະກອບມີ 8 ບ້ານ ແລະ 1,533 ຄົວເຮືອນ ເຊິ່ງສາມາດສຸ່ມກຸ່ມຕົວຢ່າງ ຕາມແບບວິທີຂອງຢາມາເນ (Yamane, 1967) ໄດ້ດັ່ງນີ້:

$$n=\frac{N}{1+N(e^2)}$$

$n$ = ແມ່ນຂະໜາດຕົວຢ່າງທີ່ຕ້ອງການ

$N$ = ແມ່ນຈຳນວນປະຊາກອນທັງໝົດ

$e^2$ = ຄ່າຄວາມຄາດເຄື່ອນຂອງຂະໜາດປະຊາກອນ (ກຳນົດ 5% ຫຼື 0.05)

ແທນຕາມສູດ:

$$n=\frac{1,533}{1+1,533(0.05)^2}=\frac{1,533}{4.8325}=317.22 \text{ ຄົວເຮືອນ}$$

ເພື່ອຄວາມຊັດເຈນ ແລະ ປ້ອງກັນການຄາດເຄື່ອນໃນການເກັບແບບສອບຖາມຕົວຈິງ; ດັ່ງນັ້ນ ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາລວມເປັນ 318 ຄົວເຮືອນ.

### 2.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ການສຶກສານີ້ໄດ້ນຳໃຊ້ວິທີການສຶກສາແບບປະລິມານ; ໂດຍນຳໃຊ້ໃຊ້ແບບສອບຖາມທີ່ມີລັກສະນະປາຍປິດ ແລະ ປາຍເປີດ ເຊິ່ງແບ່ງອອກເປັນ 5 ສ່ວນ ຄື: ສ່ວນທີ 1: ຂໍ້ມູນສະພາບເສດຖະກິດທົ່ວໄປຂອງຄົວເຮືອນ, ສ່ວນທີ 2: ຂໍ້ມູນກ່ຽວກັບຮູບແບບການບໍລິໂພກ, ການອອມ ແລະ ພາລະໜີ້ສິນຂອງຄົວເຮືອນ, ສ່ວນທີ 3 ກິດຈະກຳການເຮັດບັນຊີລາຍໄດ້-ລາຍຈ່າຍຂອງຄົວເຮືອນ, ສ່ວນທີ່ 4 ປັດໄຈອື່ນໆທີ່

ສິ່ງຜົນຕໍ່ການບໍລິໂພກຂອງຄົວເຮືອນ, ສ່ວນທີ 5 ປັດໃຈທີ່ມີຜົນຕໍ່ການອອມຂອງຄົວເຮືອນ ໂດຍກຳນົດກຳນົດເປັນ Choice ໃຫ້ເລືອກ; ສ່ວນຂໍ້ມູນປັດໃຈອື່ນໆທີ່ສົ່ງຜົນຕໍ່ການບໍລິໂພກຂອງຄົວເຮືອນ ແລະ ປັດໃຈທີ່ມີຜົນຕໍ່ການອອມຂອງຄົວເຮືອນ ແມ່ນໄດ້ກຳນົດເປັນຄ່າລະດັບ (Likert scale). ໂດຍການສ້າງແບບສອບຖາມແມ່ນໄດ້ນຳໃຊ້ທິດສະດີລາຍໄດ້, ທິດສະດີການບໍລິໂພກ, ທິດສະດີການອອມ-ໜີ້ສິນ ແລະ ບົດຄົ້ນຄວ້າທີ່ເຮັດການສຶກສາໃນຫົວຂໍ້ ຫຼື ປະເດັນທີ່ຄ້າຍຄືກັນ ມາເປັນແບບຢ່າງອ້າງອີງ ພາຍຫຼັງສຳເລັດແລ້ວໄດ້ນຳແບບສອບຖາມໄປຜ່ານຜູ້ຊ່ຽວຊານຈຳນວນ 3 ທ່ານ ເພື່ອຫາຄ່າດັດສະນີຄວາມສອດຄ່ອງລະຫວ່າງເນື້ອໃນຄຳຖາມ ກັບຈຸດປະສົງ (Index of Item-Objective Congruence ຫຼື IOC) ຂອງທຸກຄຳຖາມໃນແບບສອບຖາມໄດ້ຄ່າສະເລ່ຍເທົ່າກັບ 0.85 ເຊິ່ງໃຫຍ່ກວ່າ 0.50 ແລະ ຜ່ານການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມດ້ວຍການຫາຄ່າສຳປະສິດ Cronbach's Alpha ມີຄ່າເທົ່າກັບ 0.955 ຫຼື 95.5% ເຊິ່ງສູງກວ່າເກນມາດຕະຖານທີ່ກຳນົດໄວ້ ຄື 80%. ສະແດງວ່າເນື້ອໃນແບບສອບຖາມສອດຄ່ອງກັບຈຸດປະສົງໃນການຄົ້ນຄວ້າ ແລະ ສາມາດນຳໄປໃຊ້ເປັນເຄື່ອງມືໃນການລົງເກັບຂໍ້ມູນໃນຂັ້ນຕໍ່ໄປໄດ້.

### 2.3 ການເກັບລວມລວມຂໍ້ມູນ

ໃນການເກັບກຳ ແລະ ລວບລວມຂໍ້ມູນ ຜູ້ສຶກສາໄດ້ມີການລົງເກັບກຳຂໍ້ມູນຕົວຈິງຈາກຫົວໜ້າຄົວເຮືອນ ກຸ່ມມະໂນ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍສະເພາະແມ່ນຂໍ້ມູນກ່ຽວກັບສະພາບເສດຖະກິດຂອງຄົວເຮືອນ.ໂດຍໃຊ້ໄລຍະເວລາ 2 ເດືອນ ຄື: ເລີ່ມແຕ່ເດືອນ ພະຈິກ ຫາ ເດືອນທັນວາ ປີ 2025 ດ້ວຍການນຳແບບສອບຖາມລົງໄປແຈກຢາຍໃຫ້ກັບຜູ້ເປັນຫົວໜ້າຄົວເຮືອນ ຫຼື ສະມາຊິກໃນຄອບຄົວທີ່ເປັນຕົວແທນຂອງກຸ່ມຕົວຢ່າງເປົ້າໝາຍ; ພ້ອມທັງໄດ້ອະທິບາຍລາຍລະອຽດກ່ຽວກັບແຕ່ລະຂໍ້ຄຳຖາມໃນແບບສອບຖາມເພື່ອໃຫ້ຜູ້ຕອບແບບສອບຖາມມີຄວາມເຂົ້າໃຈ ແລະ ໃຫ້ຂໍ້ມູນໄດ້ຖືກຕ້ອງຕາມຈຸດປະສົງທີ່ຕ້ອງການ ແລະ ເກັບແບບສອບຖາມຄືນພ້ອມພາຍຫຼັງສຳເລັດ. ໂດຍນຳໃຊ້ແບບສອບຖາມເປັນເຄື່ອງມື ໃນການເກັບຂໍ້ມູນ ເຊິ່ງລວມມີທັງຄຳຖາມປາຍປິດ ແລະ ປາຍເປີດ.

### 2.4 ການວິເຄາະຂໍ້ມູນ

ພາຍຫຼັງເກັບກຳຂໍ້ມູນໄດ້ສຳເລັດແລ້ວ ແມ່ນໄດ້ນຳຂໍ້ມູນມາວິເຄາະ ເພື່ອຊອກຫາຄ່າເປີເຊັນ (%), ຜົນລວມ ຫຼື ການແຈກຢາຍຄວາມຖີ່ (Frequancy) ໂດຍນຳສະເໜີເປັນຕາຕະລາງສຳລັບຂໍ້ມູນການວິເຄາະໂຄງສ້າງເສດຖະກິດພາກຄົວເຮືອນຂອງປະຊາຊົນກຸ່ມມະໂນໃນນະຄອນຫຼວງພະບາງ; ສ່ວນຂໍ້ມູນປັດໃຈທີ່ສົ່ງຜົນຕໍ່ ການປ່ຽນແປງໂຄງສ້າງເສດຖະກິດພາກຄົວເຮືອນຂອງປະຊາຊົນກຸ່ມມະໂນ ໃນນະຄອນຫຼວງພະບາງ ແມ່ນຈະວິເຄາະໂດຍການນຳໃຊ້ແບບຈຳລອງເສັ້ນການຖົດຖອຍແບບພະຫຸຄູນ Multiple regression ດ້ວຍວິທີກຳລັງສອງນ້ອຍສຸດ (Ordinary Least Square: OLS) (Intakesone, 2008) ເຂົ້າໃນການວິເຄາະຂໍ້ມູນ ແລະ ໄດ້ມີການນຳໃຊ້ສຳປະສິດສະຫະສຳພັນເຂົ້າໃນການກວດສອບຄວາມສຳພັນກັນລະຫວ່າງຕົວປ່ຽນ ເຊິ່ງສະແດງອອກໃນຄ່າການທົດສອບຄ່າ t-statistic ແລະ F-statistic ໂດຍການວິເຄາະຜ່ານໂປຼແກມວິເຄາະຂໍ້ມູນທາງສະຖິຕິ (SPSS Version 27) ແລະ ໄດ້ມີການກຳນົດຄ່າລະດັບຄວາມສຳຄັນ ຄື $^{*}p \le 0.1$ $^{**}p \le 0.05$ $^{***}p \le 0.01$.

## 3. ຜົນໄດ້ຮັບ

### 3.1 ວິເຄາະໂຄງສ້າງເສດຖະກິດພາກຄົວເຮືອນໃນນະຄອນຫຼວງພະບາງ

ສຳລັບຜົນການວິເຄາະໂຄງສ້າງເສດຖະກິດພາກຄົວເຮືອນ ຂອງປະຊາຊົນກຸ່ມມະໂນ ນະຄອນຫຼວງພະບາງ ແມ່ນຈະປະກອບດ້ວຍ: ສະພາບໂຄງສ້າງທາງດ້ານລາຍໄດ້, ໂຄງສ້າງທາງດ້ານຄ່າໃຊ້ຈ່າຍດ້ານການບໍລິໂພກ, ເຊິ່ງການບໍລິໂພກຈະປະກອບມີ 12 ໝວດ ຄື: ຄ່າໃຊ້ຈ່າຍດ້ານອາຫານ, ຄ່າໃຊ້ຈ່າຍດ້ານເຄື່ອງດື່ມ, ຄ່າໃຊ້ຈ່າຍດ້ານເຄື່ອງນຸ່ງຫົ່ມ, ຄ່າໃຊ້ຈ່າຍດ້ານສາທາລະນະສຸກ, ຄ່າໃຊ້ຈ່າຍດ້ານທີ່ພັກອາໄສ, ຄ່າໃຊ້ຈ່າຍດ້ານການສຶກສາ, ຄ່າໃຊ້ຈ່າຍດ້ານການຄົມມະນາຄົມ, ຄ່າໃຊ້ຈ່າຍດ້ານກິດຈະກຳຕ່າງໆ, ຄ່າໃຊ້ຈ່າຍດ້ານສິນຄ້າຟຸມເຟືອຍ, ຄ່າໃຊ້ຈ່າຍດ້ານວັດທະນະທຳ ແລະ ຮີດຄອງປະເພນີ, ຄ່າໃຊ້ຈ່າຍດ້ານການເຮັດການກະເສດ ແລະ ສ້ອມແປງເຄື່ອງຈັກ, ຄ່າໃຊ້ຈ່າຍໂດຍກົດລະບຽບຂອງພັກລັດ ແລະ ຂໍ້ກຳນົດອື່ນໆ, ສະພາບໂຄງສ້າງທາງດ້ານການອອມ ແລະ ໂຄງສ້າງທາງດ້ານໜີ້ສິນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ຜ່ານການສຳຫຼວດ ແລະ ເກັບຂໍ້ມູນຕົວຈິງຈາກຄົວເຮືອນຂອງປະຊາຊົນກຸ່ມມະໂນ ນະຄອນຫຼວງພະບາງ ຈຳນວນ 318 ຄົວເຮືອນ ສະແດງໃຫ້ເຫັນວ່າ ລາຍໄດ້ໂດຍສະເລ່ຍຕໍ່ເດືອນໃນຄົວເຮືອນໂດຍສ່ວນໃຫຍ່ແມ່ນ ຫຼາຍກວ່າ 20,000,001 ຂຶ້ນໄປ ມີຈຳນວນ 88 ຄົວເຮືອນ ກວມເອົາ 27.67%. ໂຄງສ້າງຂອງແຫຼ່ງລາຍໄດ້ໂດຍສ່ວນໃຫຍ່ແມ່ນໄດ້ມາຈາກການເຮັດທຸລະກິດ ມີຈຳນວນ 166 ຄົວເຮືອນ ກວມເອົາ 52.20%, ຮອງລົງມາແມ່ນແຫຼ່ງລາຍໄດ້ມາຈາກເງິນເດືອນ, ແຫຼ່ງລາຍໄດ້ມາຈາກການເຮັດກະສິກຳ ແລະ ສຸດທ້າຍແມ່ນແຫຼ່ງລາຍໄດ້ມາຈາກແຫຼ່ງອື່ນໆ. ສ່ວນໂຄງສ້າງທາງດ້ານລາຍຈ່າຍ ທີ່ໃຊ້ເຂົ້າໃນການບໍລິໂພກຄົວເຮືອນ ທີ່ຫຼາຍທີ່ສຸດ ແມ່ນໃຊ້ຈ່າຍໃນໝວດການໃຊ້ຈ່າຍໃນໝວດອາຫານ ມີຈຳນວນ 278 ຄົວເຮືອນ ຄິດເປັນ 87.42%, ສະເລ່ຍແມ່ນ 2,920,439 ກີບ/ຄົວເຮືອນ/ເດືອນ ເຊິ່ງການໃຊ້ຈ່າຍໃນໝວດນີ້ສ່ວນໃຫຍ່ແມ່ນ: ການໃຊ້ຈ່າຍຊື້ເຂົ້າ, ການໃຊ້ຈ່າຍຊື້ເຂົ້າໜົມໃຫ້ລູກຫຼານ, ການໃຊ້ຈ່າຍຊື້ໝາກໄມ້ຕ່າງໆ ແລະ ຜັກ, ການໃຊ້ຈ່າຍເຄື່ອງປຸງທີ່ໃຊ້ໃນຄົວ, ການໃຊ້ຈ່າຍຊີ້ນທຸກປະເພດ ແລະ ການໃຊ້ຈ່າຍຊື້ອາຫານມາຈາກຂ້າງນອກ. ສຳລັບການອອມຂອງຄົວເຮືອນສ່ວນໃຫຍ່ມີເງິນອອມ ຈຳນວນ 314 ຄົວເຮືອນ ກວມເອົາ 98.8% ແລະ ຄົວເຮືອນ ສ່ວນໃຫຍ່ມີເງິນອອມ 5,000,001/ປີ ຂຶ້ນໄປ ເຊິ່ງຈຸດປະສົງ

ໃນການອອມແມ່ນ ເພື່ອໃຊ້ຈ່າຍໃນຊີວິດປະຈຳວັນ ເປັນສ່ວນໃຫຍ່ມີຈຳນວນ 173 ຄົວເຮືອນ ກວມເອົາ 55.10%. ສ່ວນໜີ້ສິນຂອງຄົວເຮືອນຈາກການສຳຫຼວດພົບວ່າ ຄົວເຮືອນສ່ວນໃຫຍ່ແມ່ນບໍ່ມີໜີ້ສິນ ມີຈຳນວນ 247 ຄົວເຮືອນ ກວມເອົາ 77.67% ແລະ ຄົວເຮືອນທີ່ຍັງຄົງມີໜີ້ສິນ ມີຈຳນວນ 71 ຄົວເຮືອນ ຄິດເປັນ 22.33%, ເຊິ່ງໜີ້ສິນສ່ວນໃຫຍ່ຂອງຄົວເຮືອນແມ່ນມີ 5,000,001 ຂຶ້ນໄປ ແລະ ໜີ້ສິນຄົວເຮືອນສ່ວນໃຫຍ່ແມ່ນ (ເຂົ້າຫວຍ) ຈຳນວນ 35 ຄົວເຮືອນ ກວມເອົາ 49.30%, ຮອງລົງມາແມ່ນໜີ້ ຈາກການກູ້ຢືມພີ່ນ້ອງ ແລະ ໜີ້ສິນຄົວເຮືອນ ຈາກການກູ້ຢືມທະນາຄານ.

**3.2 ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງເສດຖະກິດພາກຄົວເຮືອນໃນນະຄອນຫຼວງພະບາງ**

**1) ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານລາຍໄດ້ພາກຄົວເຮືອນໃນນະຄອນຫຼວງພະບາງ**

ຈາກຜົນການວິເຄາະ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານລາຍໄດ້ພາກຄົວເຮືອນໃນນະຄອນຫຼວງພະບາງ ພົບວ່າ: ຄ່າສະຖິຕິທົດສອບ F-Satistics ຫຼື ການທົດສອບຄວາມຜັນຜວນຂອງຕົວປ່ຽນ (F = 96.210) ແລະ ມີລະດັບຄວາມສຳຄັນທາງສະຖິຕິ Sig = 0.001<0.01, ສະແດງວ່າ: ແບບຈຳລອງປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງທາງດ້ານລາຍໄດ້ພາກຄົວເຮືອນຂອງປະຊາຊົນກຸ່ມບ້ານມະໂນ ໃນນະຄອນຫຼວງພະບາງ ມີຢ່າງໜ້ອຍ 1 ປັດໄຈສົ່ງຜົນຕໍ່ລະດັບລາຍໄດ້ຄົວເຮືອນ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

ການທົດສອບ t-satistics ແມ່ນການທົດສອບວ່າ ແຕ່ລະປັດໄຈສົ່ງຜົນຕໍ່ລາຍໄດ້ພາກຄົວເຮືອນຂອງປະຊາຊົນກຸ່ມບ້ານມະໂນ ຫຼື ບໍ່ ເຊິ່ງຈາກການທົດສອບເຫັນວ່າ ແຕ່ລະປັດໄຈທີ່ມີຜົນຕໍ່ດ້ານລາຍໄດ້ ຄື:

- ສຳລັບ ອາຍຸ (A) ມີຄ່າສຳປະສິດການຖົດຖອຍເທົ່າກັບ -603,194.54 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຫົວໜ້າຄອບຄົວອາຍຸຫຼາຍ ຈະມີລາຍໄດ້ໜ້ອຍກວ່າຄົວເຮືອນທີ່ມີຫົວໜ້າຄອບຄົວອາຍຸໜ້ອຍ ສະແດງວ່າອາຍຸເພີ່ມຂຶ້ນສົ່ງຜົນຕໍ່ການຫຼຸດໂອກາດໃນການຫາລາຍໄດ້ເຊັ່ນ: ບຳນານ ຫຼື ບໍ່ສາມາດປະກອບອາຊີບໄດ້ເຕັມທີ່ຄືກັນກັບໄວໜຸ່ມ ດ້ວຍລະດັບຄວາມເຊື່ອໝັ້ນ 90%.

- ສຳລັບ ການສຶກສາ (EDU) ມີຄ່າສຳປະສິດການຖົດຖອຍເທົ່າກັບ -1,094,351.26 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຫົວໜ້າຄອບຄົວທີ່ມີການສຶກສາສູງ ຈະມີລາຍໄດ້ໜ້ອຍກວ່າຄົວເຮືອນທີ່ມີຫົວໜ້າຄອບຄົວທີ່ມີການສຶກສາຕ່ຳ ສະແດງໃຫ້ເຫັນວ່າການທີ່ມີລາຍໄດ້ສູງບໍ່ຈຳເປັນອາໄສວຸດທິການສຶກສາສູງເຊັ່ນ: ການເຮັດອາຊີບທຸລະກິດຄ້າຂາຍ, ການກະເສດ ໃນຂະນະທີ່ຜູ້ທີ່ມີວຸດທິການສຶກສາສູງບາງສ່ວນອາດເຮັດວຽກພາກລັດ ຫຼື ວຽກທີ່ມີລາຍໄດ້ປະຈຳຄົງທີ່ ສົ່ງຜົນໃຫ້ລາຍໄດ້ໃນຄົວເຮືອນຕ່ຳກວ່າ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສຳລັບ ອາຊີບຫຼັກ (P1) ມີຄ່າສຳປະສິດການຖົດຖອຍເທົ່າກັບ -6,062,719.82 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຫົວໜ້າຄອບຄົວທີ່ມີອາຊີບຫຼັກສັງກັດລັດ ຈະມີລາຍໄດ້ໜ້ອຍກວ່າຄົວເຮືອນທີ່ມີຫົວໜ້າຄອບຄົວທີ່ມີອາຊີບຫຼັກອື່ນໆ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສຳລັບ ອາຊີບສຳຮອງ (P2) ມີຄ່າສຳປະສິດການຖົດຖອຍເທົ່າກັບ 5,470,276.77 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີອາຊີບສຳຮອງ ຈະມີລາຍໄດ້ຫຼາຍກວ່າຄົວເຮືອນທີ່ບໍ່ມີອາຊີບສຳຮອງ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສຳລັບ ຈຳນວນແຮງງານ (L) ມີຄ່າສຳປະສິດການຖົດຖອຍເທົ່າກັບ 3,155,128.18 ເຊິ່ງສາມາດອະທິບາຍໄດ້ວ່າສຳລັບຈຳນວນແຮງງານໃນຄົວເຮືອນ ມີການພົວພັນໄປໃນທາງດຽວກັນກັບລາຍໄດ້ ນັ້ນຄື: ເມື່ອຈຳນວນແຮງງານໃນຄົວເຮືອນເພີ່ມຂຶ້ນ ຈະເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

**2) ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານການບໍລິໂພກພາກຄົວເຮືອນໃນນະຄອນຫຼວງພະບາງ**

ຈາກຜົນການວິເຄາະ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານການບໍລິໂພກພາກຄົວເຮືອນໃນນະຄອນຫຼວງພະບາງ ເຫັນວ່າ: ຄ່າສະຖິຕິທົດສອບ F-Statistics ຫຼື ການທົດສອບຄວາມຜັນຜວນຂອງຕົວປ່ຽນ (F = 321.940) ແລະ ມີລະດັບຄວາມສຳຄັນທາງສະຖິຕິ Sig = 0.001<0.01, ສະແດງວ່າ: ແບບຈຳລອງປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານການບໍລິໂພກພາກຄົວເຮືອນໃນນະຄອນຫຼວງພະບາງ ມີຢ່າງໜ້ອຍ 1 ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານການບໍລິໂພກພາກຄົວເຮືອນ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

ການທົດສອບ t-statistics ແມ່ນການທົດສອບວ່າ ແຕ່ລະປັດໄຈສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານການບໍລິໂພກພາກຄົວເຮືອນໃນນະຄອນຫຼວງພະບາງ ຫຼື ບໍ່ ເຊິ່ງຈາກການທົດສອບເຫັນວ່າ:

- ສຳລັບ ປັດໄຈດ້ານລາຍໄດ້ (Inc) ມີຄ່າສຳປະສິດການຖົດຖອຍເທົ່າກັບ 488,921.48 ເຊິ່ງສາມາດອະທິບາຍໄດ້ວ່າ ສຳລັບດ້ານຂອງຄົວເຮືອນ ມີການພົວພັນໄປໃນທາງດຽວກັນກັບການບໍລິໂພກ ນັ້ນຄື: ເມື່ອຄົວເຮືອນມີລາຍຮັບເພີ່ມຫຼາຍຂຶ້ນ ຄົວເຮືອນນັ້ນຈະມີການບໍລິໂພກຫຼາຍກວ່າ ຄົວເຮືອນທີ່ມີລາຍໄດ້ໜ້ອຍ ດ້ວຍລະດັບຄວາມເຊື່ອໝັ້ນ 90%.

- ສຳລັບ ອາຊີບຫຼັກ (P1) ມີຄ່າສຳປະສິດການຖົດຖອຍເທົ່າກັບ -1,657,699.97 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຫົວໜ້າຄອບຄົວມີອາຊີບຫຼັກສັງກັດລັດ ຈະມີການບໍລິໂພກໜ້ອຍກວ່າຄົວເຮືອນທີ່ມີຫົວໜ້າຄອບຄົວມີອາຊີບຫຼັກອື່ນໆ ສະແດງໃຫ້ເຫັນວ່າຄົວເຮືອນທີ່ມີອາຊີບຫຼັກສັງກັດລັດ ທີ່ມີລາຍໄດ້ໜ້ອຍກວ່າຈະມີການບໍລິໂພກທີ່ໜ້ອຍລົງເຊັ່ນກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສໍາລັບ ອາຊີບສໍາຮອງ (P2) ມີຄ່າສໍາປະສິດການຖົດຖອຍເທົ່າກັບ 4,787,399.67 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີອາຊີບສໍາຮອງ ຈະມີການບໍລິໂພກຫຼາຍກວ່າຄົວເຮືອນທີ່ບໍ່ມີອາຊີບສໍາຮອງ ສະແດງໃຫ້ເຫັນວ່າ ຄົວເຮືອນທີ່ມີອາຊີບສໍາຮອງທີ່ສາມາດສ້າງລາຍໄດ້ຫຼາຍກວ່າ ຈະມີການໃຊ້ຈ່າຍສິນຄ້າໄດ້ໃນລາຄາທີ່ແພງກວ່າ ສິ່ງຜົນໃຫ້ມີການບໍລິໂພກຫຼາຍກວ່າຄົວເຮືອນທີ່ບໍ່ມີອາຊີບສໍາຮອງ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສໍາລັບ ຈໍານວນສະມາຊິກໃນຄົວເຮືອນ (SI) ມີຄ່າສໍາປະສິດການຖົດຖອຍເທົ່າກັບ 938,295.13 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຈໍານວນສະມາຊິກເພີ່ມຂຶ້ນ ຈະສິ່ງຜົນໃຫ້ມີບໍລິໂພກເພີ່ມຂຶ້ນ ສະແດງໃຫ້ເຫັນວ່າ ຄົວເຮືອນທີ່ມີຈໍານວນສະມາຊິກຫຼາຍ ຈະມີການໃຊ້ຈ່າຍບໍລິໂພກຫຼາຍຕາມມາເຊັ່ນກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

**3) ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານການອອມພາກຄົວເຮືອນໃນນະຄອນຫຼວງພະບາງ**

ຈາກຜົນການວິເຄາະຂອງປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານການອອມພາກຄົວເຮືອນໃນນະຄອນຫຼວງພະບາງ ພົບວ່າ: ຄ່າສະຖິຕິທົດສອບ F-Satistics ຫຼື ການທົດສອບຄວາມຜັນຜວນຂອງຕົວປ່ຽນ (F = 532.991) ແລະ ມີລະດັບຄວາມສໍາຄັນທາງສະຖິຕິ Sig = 0.001<0.01, ສະແດງວ່າ: ແບບຈໍາລອງປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານການອອມພາກຄົວເຮືອນໃນນະຄອນຫຼວງພະບາງ ມີຢ່າງໜ້ອຍ 1 ປັດໄຈສົ່ງຜົນຕໍ່ລະດັບການອອມຄົວເຮືອນ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

ການທົດສອບ t-satistics ແມ່ນການທົດສອບວ່າ ແຕ່ລະປັດໄຈສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານການອອມພາກຄົວເຮືອນໃນນະຄອນຫຼວງພະບາງ ຫຼື ບໍ່ ເຊິ່ງຈາກການທົດສອບເຫັນວ່າ:

- ສໍາລັບ ລາຍໄດ້ຂອງຄົວເຮືອນ (Inc) ມີຄ່າສໍາປະສິດການຖົດຖອຍເທົ່າກັບ 0.255 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີລາຍໄດ້ ຈະມີການເກັບອອມຫຼາຍກວ່າຄົວເຮືອນທີ່ມີລາຍໄດ້ໜ້ອຍກວ່າ ເຖິງ 25.5% ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສໍາລັບ ເພດ (G) ມີຄ່າສໍາປະສິດການຖົດຖອຍເທົ່າກັບ -0.955 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຫົວໜ້າຄອບຄົວເພດຍິງຈະມີການອອມ ຫຼາຍກວ່າຄົວເຮືອນທີ່ມີຫົວໜ້າຄົວເຮືອນເພດຊາຍ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສໍາລັບ ອາຊີບຫຼັກ (P1) ມີຄ່າສໍາປະສິດການຖົດຖອຍເທົ່າກັບ -1.245 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຫົວໜ້າຄອບຄົວມີອາຊີບຫຼັກສັງກັດລັດ ຈະມີການອອມໜ້ອຍກວ່າຄົວເຮືອນທີ່ມີຫົວໜ້າຄອບຄົວມີອາຊີບຫຼັກອື່ນໆ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສໍາລັບ ອາຊີບສໍາຮອງ (P2) ມີຄ່າສໍາປະສິດການຖົດຖອຍເທົ່າກັບ 0.625 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີອາຊີບສໍາຮອງ ຈະມີການອອມຫຼາຍກວ່າຄົວເຮືອນທີ່ບໍ່ມີອາຊີບສໍາຮອງ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສໍາລັບ ຈໍານວນສະມາຊິກໃນຄົວເຮືອນ (SI) ມີຄ່າສໍາປະສິດການຖົດຖອຍເທົ່າກັບ -0.437 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຈໍານວນສະມາຊິກເພີ່ມຂຶ້ນ ຈະສິ່ງຜົນໃຫ້ມີການອອມຫຼຸດລົງ ສະແດງໃຫ້ເຫັນວ່າ ຄົວເຮືອນທີ່ມີສະມາຊິກຫຼາຍກໍຈະມີພາລະຫຼາຍຕາມມາເຊັ່ນກັນ ສິ່ງຜົນໃຫ້ມີການອອມຫຼຸດລົງ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສໍາລັບ ຈໍານວນແຮງງານໃນຄົວເຮືອນ (L) ມີຄ່າສໍາປະສິດການຖົດຖອຍເທົ່າກັບ 0.567 ເຊິ່ງສາມາດອະທິບາຍໄດ້ວ່າສໍາລັບຈໍານວນສະມາຊິກແຮງງານ ມີການພົວພັນໄປໃນທາງດຽວກັນກັບການອອມ ນັ້ນຄື: ເມື່ອຈໍານວນສະມາຊິກແຮງງານເພີ່ມຂຶ້ນ ລາຍໄດ້ຂອງຄົວເຮືອນຈະຫຼາຍຂຶ້ນ ຈະສິ່ງຜົນໃຫ້ບໍລິມາດການອອມຂອງຄົວເຮືອນເພີ່ມຂຶ້ນ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

**4) ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານໜີ້ສິນພາກຄົວເຮືອນໃນນະຄອນຫຼວງພະບາງ**

ຈາກຜົນການວິເຄາະ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານໜີ້ສິນພາກຄົວເຮືອນໃນນະຄອນຫຼວງພະບາງ ພົບວ່າ: ຄ່າສະຖິຕິທົດສອບ F-Satistics ຫຼື ການທົດສອບຄວາມຜັນຜວນຂອງຕົວປ່ຽນ (F = 311.393) ແລະ ມີລະດັບຄວາມສໍາຄັນທາງສະຖິຕິ Sig = 0.001<0.01, ສະແດງວ່າ: ແບບຈໍາລອງ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານໜີ້ສິນພາກຄົວເຮືອນໃນນະຄອນຫຼວງພະບາງມີຢ່າງໜ້ອຍ 1 ປັດໄຈສົ່ງຜົນຕໍ່ລະດັບໜີ້ສິນຂອງພາກຄົວເຮືອນ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

ການທົດສອບ t-satistics ແມ່ນການທົດສອບວ່າ ແຕ່ລະປັດໄຈສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານໜີ້ສິນພາກຄົວເຮືອນໃນນະຄອນຫຼວງພະບາງ ຫຼື ບໍ່ ເຊິ່ງຈາກການທົດສອບ ເຫັນວ່າ:

- ສໍາລັບ ລາຍໄດ້ຂອງຄົວເຮືອນ (Inc) ມີຄ່າສໍາປະສິດການຖົດຖອຍເທົ່າກັບ -0.523 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີລາຍໄດ້ໜ້ອຍບໍ່ພຽງພໍຕໍ່ຄ່າໃຊ້ຈ່າຍ ຈະມີໜີ້ສິນຫຼາຍກວ່າຄົວເຮືອນທີ່ມີລາຍໄດ້ຫຼາຍ ສະແດງວ່າ ຄົວເຮືອນທີ່ມີລາຍໄດ້ໜ້ອຍ ການໃຊ້ຈ່າຍໃນຄົວເຮືອນຫຼາຍ ສິ່ງຜົນໃຫ້ມີໜີ້ສິນຫຼາຍກວ່າ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສໍາລັບ ເພດ (G) ມີຄ່າສໍາປະສິດການຖົດຖອຍເທົ່າກັບ 0.391 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຫົວໜ້າຄອບຄົວເພດຊາຍຈະມີໜີ້ສິນ ຫຼາຍກວ່າຄົວເຮືອນທີ່ມີຫົວໜ້າຄອບຄົວເພດຍິງ ດ້ວຍລະດັບຄວາມເຊື່ອໝັ້ນ 90%.

- ສຳລັບ ການສຶກສາ (EDU) ມີຄ່າສຳປະສິດການຖົດຖອຍເທົ່າກັບ -0.151 ເຊິ່ງສາມາດອະທິບາຍໄດ້ວ່າ: ຫົວໜ້າຄົວເຮືອນທີ່ມີລະດັບການສຶກສາສູງຈະມີໜີ້ສິນ ໜ້ອຍກວ່າຫົວໜ້າຄົວເຮືອນທີ່ມີລະດັບການສຶກສາຕ່ຳ ສະແດງໃຫ້ເຫັນວ່າ ຄົວເຮືອນທີ່ມີການສຶກສາສູງຈະມີຄວາມຮອບຄອບທາງການເງິນ ເຊິ່ງອາດຈະມາຈາກຄວາມຮູ້, ຄວາມລະມັດລະວັງໃນການໃຊ້ຈ່າຍ ຫຼື ມີການວາງແຜນທີ່ດີ ສິ່ງຜົນໃຫ້ມີໜີ້ສິນໜ້ອຍກວ່າ ຄົວເຮືອນທີ່ມີການສຶກສາຕ່ຳ ດ້ວຍລະດັບຄວາມເຊື່ອໝັ້ນ 90%.

- ສຳລັບ ອາຊີບຫຼັກ (P1) ມີຄ່າສຳປະສິດການຖົດຖອຍເທົ່າກັບ -0.599 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຫົວໜ້າຄອບຄົວມີອາຊີບຫຼັກສັງກັດລັດ ຈະມີໜີ້ສິນໜ້ອຍກວ່າຄົວເຮືອນທີ່ມີຫົວໜ້າຄອບຄົວມີອາຊີບຫຼັກອື່ນໆ ສະແດງໃຫ້ເຫັນວ່າ ຄອບຄົວທີ່ມີອາຊີບຫຼັກອື່ນໆ ຈະມີການກູ້ຢືມເນື່ອງມາຈາກການລົງທຶນໃນທຸລະກິດຄ້າຂາຍ ສິ່ງຜົນໃຫ້ມີໜີ້ສິນຫຼາຍກວ່າ ຄອບຄົວມີອາຊີບຫຼັກສັງກັດລັດ ດ້ວຍລະດັບຄວາມເຊື່ອໝັ້ນ 90%.

- ສຳລັບ ອາຊີບສຳຮອງ (P2) ມີຄ່າສຳປະສິດການຖົດຖອຍເທົ່າກັບ 1.469 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີອາຊີບສຳຮອງ ຈະມີໜີ້ສິນຫຼາຍກວ່າຄົວເຮືອນທີ່ບໍ່ມີອາຊີບສຳຮອງ ສະແດງໃຫ້ເຫັນວ່າ ຄົວເຮືອນມີອາຊີບສຳຮອງກໍຕ້ອງໄດ້ກູ້ຢືມເພື່ອມາລົງທຶນຕໍ່ ສິ່ງຜົນໃຫ້ມີໜີ້ສິນຫຼາຍກວ່າ ຄົວເຮືອນທີ່ບໍ່ມີອາຊີບສຳຮອງ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ສຳລັບ ຈຳນວນສະມາຊິກໃນຄົວເຮືອນ (SI) ມີຄ່າສຳປະສິດການຖົດຖອຍເທົ່າກັບ 0.878 ເຊິ່ງສາມາດອະທິບາຍໄດ້ວ່າ: ຄົວເຮືອນທີ່ມີຈຳນວນສະມາຊິກເພີ່ມຂຶ້ນ ຈະສິ່ງຜົນໃຫ້ມີໜີ້ສິນເພີ່ມຂຶ້ນ ສະແດງໃຫ້ເຫັນວ່າ ຄົວເຮືອນທີ່ມີສະມາຊິກຫຼາຍກໍຈະມີພາລະຫຼາຍຕາມມາເຊັ່ນກັນ ສິ່ງຜົນໃຫ້ມີໜີ້ສິນເພີ່ມຂຶ້ນ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

## 4. ວິພາກຜົນ

### 4.1 ວິເຄາະໂຄງສ້າງເສດຖະກິດພາກຄົວເຮືອນໃນນະຄອນຫຼວງພະບາງ

ໃນສ່ວນຂອງສະພາບໂຄງສ້າງທາງດ້ານລາຍໄດ້ພາກຄົວເຮືອນຂອງປະຊາຊົນກຸ່ມມະໂນ ໃນນະຄອນຫຼວງພະບາງ ພົບວ່າ ແຫຼ່ງລາຍໄດ້ມາຈາກການເຮັດທຸລະກິດສ່ວນຕົວເປັນຫຼັກ, ຮອງລົງມາແມ່ນເງິນເດືອນ ແລະ ການເຮັດກະສິກຳ ຕາມລຳດັບ. ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Rukkhawattanakul (2015) ທີ່ຄົ້ນຄວ້າກ່ຽວກັບປັດໃຈທີ່ເຮັດໃຫ້ເກີດການປ່ຽນແປງຂອງລາຍໄດ້ສ່ວນບຸກຄົນໃນເຂດເສດຖະກິດພິເສດໜອງຄາຍ, ມຸກດາຫານ ແລະ ແມ່ສອດ, ປະເທດໄທ ໃນບາງຈຸດຂອງເນື້ອໃນການຄົ້ນຄວ້າ ພົບວ່າ ໃນແບບຈຳລອງປັດໃຈທີ່ມີອິດທິພົນຕໍ່ການປ່ຽນແປງລາຍໄດ້ຂອງປະຊາຊົນໄດ້ແກ່ ກຸ່ມອາຊີບຫຼັກທີ່ມີທຸລະກິດສ່ວນຕົວ, ເງິນເດືອນພະນັກງານ ແລະ ອາຊີບເສີມໄດ້ແກ່ການເຮັດກະສິກຳ ລ້ວນແລ້ວແຕ່ມີຜົນຕໍ່ລາຍໄດ້ຂອງຄົວເຮືອນ.

ໃນສ່ວນຂອງສະພາບໂຄງສ້າງທາງດ້ານລາຍຈ່າຍເພື່ອການບໍລິໂພກພາກຄົວເຮືອນ ຂອງປະຊາຊົນກຸ່ມມະໂນ ໃນນະຄອນຫຼວງພະບາງ ພົບວ່າ ຄົວເຮືອນສ່ວນຫຼາຍຈະມີລາຍຈ່າຍໃນໝວດອາຫານ, ໝວດເຄື່ອງດື່ມ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ, ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Prajunban (2015) ຄົ້ນຄວ້າກ່ຽວກັບ ປັດໃຈທີ່ມີອິດທິພົນຕໍ່ການປ່ຽນແປງຄ່າໃຊ້ຈ່າຍຂອງຄົວເຮືອນໄທ ເຊິ່ງຜົນການຄົ້ນຄວ້າເຫັນວ່າ ການໃຊ້ຈ່າຍຂອງຄົວເຮືອນໄທ ເພີ່ມສູງຂຶ້ນຢ່າງຕໍ່ເນື່ອງໃນຕະຫຼອດຊ່ວງໄລຍະປີທີ່ທຳການສຶກສາຄື ເມື່ອພິຈາລະນາການປ່ຽນແປງຄ່າໃຊ້ຈ່າຍພົບວ່າແມ່ນການໃຊ້ຈ່າຍໃນໝວດຄ່າອາຫານ, ເຄື່ອງດື່ມ ແລະ ຢາສູບ ເປັນຫຼັກ, ຮອງລົງມາແມ່ນການໃຊ້ຈ່າຍໃນໝວດການເດີນທາງ ແລະ ຍານພາຫະນະ.

ສຳລັບໃນສ່ວນຂອງສະພາບໂຄງສ້າງທາງການອອມພາກຄົວເຮືອນ ຂອງປະຊາຊົນກຸ່ມມະໂນ ນະຄອນຫຼວງພະບາງ ນັ້ນພົບວ່າ ການອອມຂອງຄົວເຮືອນກວມເອົາສັດສ່ວນຂ້ອນຂ້າງຫຼາຍ ແລະ ສ່ວນຫຼາຍແມ່ນມີຈຸດປະສົງໃນການອອມໄວ້ໃຊ້ໃນຊີວິດປະຈຳວັນ, ເພື່ອໃຊ້ໃນຍາມສຸກເສີນ, ເພື່ອໃຊ້ເປັນທຶນສຳລັບການຜະລິດກະສິກຳ, ເພື່ອໃຊ້ເປັນທຶນການສຶກສາສຳລັບລູກຫຼານ, ເພື່ອເປັນມໍລະດົກໃຫ້ລູກຫຼານ ແລະ ອອມເພື່ອຕົນເອງໃນຍາມແກ່ເຖົ້າ, ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Daenghem (2023) ເຊິ່ງຜົນການຄົ້ນຄວ້າພົບວ່າ ການເຮັດບັນຊີລາຍຮັບລາຍຈ່າຍ ແລະ ການຄິດວາງແຜນການອອມໄວ້ສຳລັບການໃຊ້ຈ່າຍໃນຊີວິດປະຈຳວັນ ແລະ ການອອມໄວ້ສຳລັບຍາມເຖົ້າແກ່ມີຜົນຕໍ່ໂຄງສ້າງການອອມສະສົມຂອງຄົວເຮືອນ.

ໃນສ່ວນຂອງສະພາບໂຄງສ້າງທາງດ້ານໜີ້ສິນພາກຄົວເຮືອນຂອງປະຊາຊົນກຸ່ມມະໂນ ນະຄອນຫຼວງພະບາງ ນັ້ນພົບວ່າ ຄົວເຮືອນທີ່ຍັງມີໜີ້ສິນນັ້ນຍັງມີຫຼາຍສົມຄວນ ເຊິ່ງໜີ້ສິນຄົວເຮືອນ ແມ່ນໄດ້ມາຈາກແຫຼ່ງອື່ນໆ (ເຂົ້າຫວຍ), ຮອງລົງມາແມ່ນໜີ້ສິນຄົວເຮືອນໄດ້ມາຈາກການກູ້ຢືມພີ່ນ້ອງ ແລະ ໜີ້ສິນຄົວເຮືອນໄດ້ມາຈາກການກູ້ຢືມທະນາຄານ. ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Thongpaen (2023) ໂດຍຜົນການສຶກສາພົບວ່າໜີ້ສິນຂອງຄົວເຮືອນສ່ວນຫຼາຍແມ່ນມາຈາກການກູ້ຢືມທະນາຄານ ແລະ ສິນເຊື່ອ ເພື່ອການລົງທຶນໃສ່ການຜະລິດກະສິກຳ ແລະ ເພື່ອເປັນທຶນການສຶກສາໃຫ້ກັບລູກຫຼານ.

### 4.2 ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງເສດຖະກິດພາກຄົວເຮືອນໃນນະຄອນຫຼວງພະບາງ

ຈາກການວິເຄາະ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານລາຍໄດ້ ແລະ ການບໍລິໂພກ ພາກຄົວເຮືອນໃນນະຄອນຫຼວງພະບາງ ພົບວ່າ ລາຍໄດ້ ແລະ ການບໍລິໂພກມີຄວາມສຳພັນກັນ ສິ່ງຜົນກະທົບເຊິ່ງກັນ ແລະ ກັນ ຢ່າງສະໜິດແໜ້ນ, ສ່ວນປັດໄຈສຳຮອງລົງມາ ແມ່ນ

ຈຳນວນແຮງງານໃນຄົວເຮືອນທີ່ສາມາດສ້າງລາຍໄດ້ເຂົ້າຄົວເຮືອນເຊິ່ງມັນສອດຄ່ອງກັບຜົນການຄົ້ນຄວ້າຂອງ Akekere & Yousuo (2012) ແລະ Kitchatnukoon & Siripanit (2014) ຕ່າງກໍ່ໃຫ້ຄວາມເຫັນກົງກັນວ່າ ລາຍໄດ້ຂອງຄົວເຮືອນ ສົ່ງຜົນຕໍ່ການບໍລິໂພກຂັ້ນຄົວເຮືອນ ເນື່ອງຈາກລາຍໄດ້ເປັນຕົວຕັດສິນຄຸນນະພາບຂອງຊີວິດ ເມື່ອລາຍໄດ້ໃນຄົວເຮືອນເພີ່ມຂຶ້ນ ການບໍລິໂພກພາຍໃນຄົວເຮືອນກໍ່ດີຂຶ້ນ ຄຸນນະພາບຊີວິດຂອງສະມາຊິກໃນຄົວເຮືອນກໍ່ດີຂຶ້ນ. ໃນສ່ວນຂອງ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານການອອມພາກຄົວເຮືອນໃນນະຄອນຫຼວງພະບາງ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Panyasack et al. (2024) ທີ່ກ່າວວ່າ ລາຍໄດ້ ເປັນຕົວປ່ຽນຫຼັກໃນການຕັດສິນການອອມຂອງບຸກຄົນ ຫຼື ຂອງຄົວເຮືອນ ຖ້າລາຍໄດ້ສ່ວນບຸກຄົນເພີ່ມຂຶ້ນ ເມື່ອຫັກໄປໃຊ້ຈ່າຍໃນການບໍລິໂພກປະຈຳວັນແລ້ວທີ່ເຫຼືອກໍ່ແມ່ນເກັບອອມ ເພື່ອໃຊ້ຈ່າຍໃນຍາມສຸກເສີນ. ສຳລັບ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານໜີ້ສິນພາກຄົວເຮືອນໃນນະຄອນຫຼວງພະບາງ ເຫັນວ່າ ລາຍໄດ້, ເພດ, ລະດັບການສຶກສາ, ອາຊີບຫຼັກ, ອາຊີບສຳຮອງ ແລະ ຈຳນວນສະມາຊິກໃນຄົວເຮືອນ ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງດ້ານໜີ້ສິນພາກຄົວເຮືອນໃນນະຄອນຫຼວງພະບາງ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Hanphichai et al. (2020) ພົບວ່າ ລາຍໄດ້ທີ່ໄດ້ຮັບໃນຄົວເຮືອນບໍ່ພຽງພໍຕໍ່ການໃຊ້ຈ່າຍ ສົ່ງຜົນເຮັດໃຫ້ຄວາມສາມາດໃນການປັບຕົວ ລະ ການບໍລິຫານການເງິນໃນຄົວເຮືອນຕິດຄັດ ຈຳເປັນຈະຕ້ອງໄດ້ກູ້ຢືມເພື່ອມາຈັບຈ່າຍໃຊ້ສອຍ.

## 5. ສະຫຼຸບ

ຜ່ານການວິເຄາະໂຄງສ້າງເສດຖະກິດພາກຄົວເຮືອນໃນນະຄອນຫຼວງພະບາງ ແລະ ປັດໄຈທີ່ມີຄວາມສຳຄັນຕໍ່ການການປ່ຽນແປງໂຄງສ້າງເສດຖະກິດພາກຄົວເຮືອນໃນນະຄອນຫຼວງພະບາງນັ້ນ ສາມາດສະຫຼຸບໄດ້ດັ່ງນີ້: ໃນສ່ວນຂອງສະພາບໂຄງສ້າງທາງດ້ານລາຍໄດ້ພາກຄົວເຮືອນ ນັ້ນມາຈາກການເຮັດທຸລະກິດສ່ວນຕົວເປັນຫຼັກ, ຮອງລົງມາແມ່ນ ເງິນເດືອນ ແລະ ການເຮັດກະສິກຳ ຕາມລຳດັບ. ໃນສ່ວນຂອງສະພາບໂຄງສ້າງທາງດ້ານລາຍຈ່າຍເພື່ອການບໍລິໂພກພາກຄົວເຮືອນ ນັ້ນແມ່ນລາຍຈ່າຍໃນໝວດອາຫານ, ໝວດເຄື່ອງດື່ມ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ. ສຳລັບໃນສ່ວນຂອງໂຄງສ້າງທາງການອອມພາກຄົວເຮືອນ ນັ້ນພົບວ່າ ການອອມຂອງຄົວເຮືອນກວມເອົາສັດສ່ວນຂ້ອນຂ້າງຫຼາຍ ແລະ ສ່ວນຫຼາຍແມ່ນມີຈຸດປະສົງໃນການອອມໄວ້ໃຊ້ໃນຊີວິດປະຈຳວັນ, ເພື່ອໃຊ້ໃນຍາມສຸກເສີນ, ເພື່ອໃຊ້ເປັນທຶນສຳລັບການຜະລິດກະສິກຳ, ເພື່ອໃຊ້ເປັນທຶນການສຶກສາສຳລັບລູກຫຼານ, ເພື່ອເປັນມໍລະດົກໃຫ້ລູກຫຼານ ແລະ ອອມເພື່ອຕົນເອງໃນຍາມແກ່ເຖົ້າ. ໃນສ່ວນຂອງໂຄງສ້າງທາງດ້ານໜີ້ສິນພາກຄົວເຮືອນ ນັ້ນພົບວ່າຍັງມີຫຼາຍສົມຄວນ ເຊິ່ງໜີ້ສິນຂອງຄົວເຮືອນ ແມ່ນໄດ້ມາຈາກແຫຼ່ງອື່ນໆ (ເຂົ້າຫວຍ), ຮອງລົງມາແມ່ນໜີ້ສິນຄົວເຮືອນໄດ້ມາຈາກການກູ້ຢືມພີ່ນ້ອງ ແລະ ໜີ້ສິນຄົວເຮືອນໄດ້ມາຈາກການກູ້ຢືມທະນາຄານ. ນອກຈາກນີ້, ຜົນການສຶກສາປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງໂຄງສ້າງເສດຖະກິດພາກຄົວເຮືອນ ໃນນະຄອນຫຼວງພະບາງ ພົບວ່າ ລາຍໄດ້ຂອງພາກຄົວເຮືອນເປັນຕົວປ່ຽນທີ່ມີຄວາມສຳຄັນ ແລະ ສົ່ງຜົນຫຼາຍທີ່ສຸດຕໍ່ການປ່ຽນແປງໂຄງສ້າງເສດຖະກິດຄົວເຮືອນ ເນື່ອງຈາກການບໍລິໂພກ, ການອອມ ແລະ ໜີ້ສິນ ລ້ວນແລ້ວແຕ່ເກີດຈາກລາຍໄດ້ຂອງຄົວເຮືອນມີໜ້ອຍ ຫຼື ຫຼາຍ, ພຽງພໍ ຫຼື ບໍ່ພຽງພໍຕໍ່ການຊົມໃຊ້. ສະນັ້ນ, ຄວນສ້າງນະໂຍບາຍສົ່ງເສີມໃຫ້ຄົວເຮືອນທີ່ມີລາຍຮັບ ມີລາຍຮັບສູງຂຶ້ນຜ່ານກິດຈະກຳທີ່ກຸ່ມບ້ານດັ່ງກ່າວມີທ່າແຮງ ເຊັ່ນ: ການຜະລິດສິນຄ້າກະສິກຳເພື່ອເປັນສິນຄ້າ, ການໃຫ້ບໍລິການອື່ນໆ. ສ້າງຖານຂໍ້ມູນໃຫ້ແຕ່ລະຄົວເຮືອນມີການບັນທຶກຈົດກ່າຍ ລາຍຮັບ-ລາຍຈ່າຍ ເພື່ອວາງແຜນທາງການເງິນພາຍໃນຄົວເຮືອນ ໂດຍການປັບການຈັດສັນເງິນ ດ້ວຍການອອມກ່ອນຈ່າຍ ຄວບຄູ່ໄປກັບການເຮັດບັນຊີລາຍຮັບລາຍຈ່າຍຕະຫຼອດຊ່ວງຊີວິດ. ເມື່ອຄົວເຮືອນມີລາຍຮັບເພີ່ມຂຶ້ນ ເມື່ອຄົວເຮືອນສາມາດບໍລິຫານຈັດການລາຍຮັບ-ລາຍຈ່າຍຢ່າງມີປະສິດທິພາບ ຄົວເຮືອນຈະຫັນມາອອມເງິນຫຼາຍຂຶ້ນ ແລະ ສາມາດທົດແທນໜີ້ສິນທີ່ຍັງຄົງຄ້າງໄດ້ສຳເລັດຕາມເວລາທີ່ກຳນົດ.

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມທີມງານຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Akekere, J. & Yousuo, P. (2012). Empirical Analysis of Change in Income on Private Consumption Expenditure in Nigeria from 1981-2010. *International Journal of Academic Research in Business and Social Sciences, 2*(11), 321-33.

Daenghem, S. (2023). Factors Affecting Thai Household Savings in the Digital Economy. Journal of Demography. *37*(1). 49-68. https://digital.car.chula.ac.th/cgi/viewcontent.cgi?article=1326&context=jdm

Gulcin, T & Aycan, H. (2014). An Analysis of Household on Consumption Expenditures in EA-18. *European Scientific Journal. 16*(2). 1-12.

Hanphichai, S., Jatuporn, C., & Suvanvihok, V. (2020). The Factors Affecting to the Farmers' Household Debts in Lopburi Province. *Journal of Modern Learning Development*, *5*(5), 309–320. https://so06.tci-thaijo.org/index.php/jomld/article/view/244776

Inthakesone, B. (2008). *Econometrics*, Faculty of Economics and Business Management. National University of Laos.

Kitchatnukoon, P., & Siripanit, P. (2014). The factors influence to expense of residents in Bangkok. *Chandrakasem Rajabhat University Journal*. *20*(38). 97-105.

Mankiw, N. G. (2019). *Macroeconomics* (10th ed.). Worth Publishers.

Panyasack, V., Somsamone, V., & Syphada, V. (2024). Factors affecting to save of enterprise employees in Oudomxay Province. *Souphanouvong University Journal Multidisciplinary Research and Development*, *10*(3), 153–162. https://doi.org/10.69692/SUJMRD100153

Prajunban, S. (2015). *Factors affecting changes in the household expenditures in Thailand* [Unpublished master's thesis]. National Institute of Development Administration.

Rukkhawattanakul, O. (2015). *Factors causing personal income variation in the Nongkhai, Mukdahan and Mae Sot special economic zones, Thailand* [Unpublished master's thesis]. Thammasat University.

Sing, Y. W., Hajar, S. S., Yassin, J., Izwan, T. S., Pinjaman, S., & Madli, F. (2024). Analysis of household consumption function based on permanent income hypothesis in Sabah, Malaysia: A conceptual framework. *Journal of Infrastructure, Policy and Development*. *8*(2): 2260. https://doi.org/10.24294/jipd.v8i2.2260.

Skulcharoen, P. (2002). *Factors affecting farm household consumption expenditure: A case study in Sriracha District,* [Unpublished doctoral dissertation]. National Institute of Development Administration.

Szopiński, T. (2017). The Determinants of Household Savings in Poland. *Acta Scientiarum Polonorum. Oeconomia*, *16*(2), 117–125. https://doi.org/10.22630/ASPE.2017.16.2.24

Thongpaen, N. (2023). *Factors Affecting Agricultural Household Debts in the Northeastern Region,* [Unpublished Master thesis]. School of Economics Sukhothai Thammathirat Open University.

Todaro, P.M. & Smith, C.S. (2006). *Economic Development* (9th ed). London: Pearson Education.

Yamane, T. (1967). *Statistics: An Introductory Analysis*, 2nd Edition, New York: Harper and Row.